# Mekong River Commission

**Office of the Secretariat in Phnom Penh (OSP)**
576 National Road, #2, Chak Angre Krom,
P.O. Box 623, Phnom Penh, Cambodia
Tel. (855-23) 425 353. Fax (855-23) 425 363

**Office of the Secretariat in Vientiane (OSV),**
Office of the Chief Executive Officer
184 Fa Ngoum Road,
P.O. Box 6101, Vientiane, Lao PDR
Tel: (856-21) 263 263. Fax: (856-21) 263 264

**ຄະນະກຳມາທິການແມ່ນ້ຳຂອງສາກົນ**

**ບົດອອກຂ່າວ**

***ໃນວັນທີ່ 3 ຕຸລາ 2013, ຢູ່ທີ່ນະຄອນຫລວງ ວຽງຈັນ, ສປປ ລາວ,* ມີລາຍງານວ່າ ສປປ ລາວ ໄດ້ຈັດສົ່ງ ຫນັງສືແຈ້ງເຕືອນໃຫ້ຊາບ ກ່ຽວກັບ ໂຄງການສ້າງເຂື່ອນໄຟຟ້ານ້ຳຕົກ ດອນສາຫົງ** - ລັດຖະບານລາວໄດ້ແຈ້ງ ໃຫ້ແກ່ ຄະນະກຳມະການແມ່ນ້ຳຂອງ (MRC) ຊາບກ່ຽວກັບການຕັດສິນໃຈ ທີ່ຈະດຳເນີນການພັດທະນາ ໂຄງການ ສ້າງເຂື່ອນໄຟຟ້ານ້ຳຕົກ ດອນສາຫົງ ຢູ່ທີ່ເຂດສີ່ພັນດອນ ພາກໃຕ້ ຂອງປະເທດລາວ. ເຂື່ອນໄຟຟ້າ ແບບຕັດລຳນ້ຳ ໂດຍບໍ່ມີອ່າງເກັບນ້ຳດັ່ງກ່າວນີ້ ຈະທຳການຜະລິດກະແສໄຟ ຕະຫລອດປີ ແລະ ສາມາດ ຜະລິດກະແສໄຟ ໄດ້ 260 ກິໂລວັດ.

ໃນຫນັງສືແຈ້ງເຕືອນໃຫ້ຊາບ ທີ່ຈັດສົ່ງໃຫ້ກອງເລຂາຄະນະກຳມາທິການແມ່ນ້ຳຂອງສາກົນ MRC ແລະ ໃນ ວັນທີ່ 30 ກັນຍາ 2013, ສປປ ລາວ ຍັງໄດ້ສະຫນອງບົດສຶກສາຄວາມເປັນໄປໄດ້ ແບບຄົບຊຸດ ເຊິ່ງປະກອບ ດ້ວຍບົດປະເມີນຜົນກະທົບທາງສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການ ແລະ ບົດສຶກສາຜົນກະທົບ ດ້ານ ການປະມົງ ເຊິ່ງຈະຖືກຈັດສົ່ງຕໍ່ ໃຫ້ແກ່ ບັນດາປະເທດສະມາຊິກຄະນະກຳມາທິການ MRC ອື່ນໆ ຄື: ປະ ເທດກຳປູເຈຍ, ໄທ ແລະ ຫວຽດນາມ.

ອີງຕາມການແຈ້ງຂອງລັດຖະບານ ສປປ ລາວ, ການກໍ່ສ້າງໂຄງການນີ້ ຈະເລີ່ມຕົ້ນໃນເດືອນພະຈິກ 2013 ແລະ ຈະສຳເລັດໃນເດືອນກຸມພາ 2018. ໂດຍຈະເລີ່ມຕົ້ນຜະລິດກະແສໄຟ ເພື່ອຈຳຫນ່າຍ ໃນເດືອນ ພຶດສະພາ 2018. ພະລັງງານທັງຫມົດທີ່ຜະລິດໄດ້ຈາກໂຄງການນີ້ ຈະສົ່ງຂາຍໃຫ້ແກ່ການຊົມໃຊ້ ພະລັງງານ ແຫ່ງຊາດ ໂດຍຂາຍໃຫ້ແກ່ບໍລິສັດໄຟຟ້າລາວ (EDL) ເພື່ອຕອບສະຫນອງ ຄວາມຕ້ອງການພະລັງງານ ພາຍ ໃນປະເທດທີ່ເພີ່ມຂຶ້ນ.

ທ່ານ Hans Guttman, ຫົວຫນ້າຜູ້ບໍລິຫານກອງເລຂາ ຄະນະກຳມາທິການແມ່ນ້ຳຂອງສາກົນ MRC ກ່າວ ວ່າ: "ສປປ ລາວ ໄດ້ແຈ້ງວ່າ ໃນໄລຍະຂອງການແຈ້ງເຕືອນໃຫ້ຊາບນີ້, ໂຄງການດັ່ງກ່າວ ຈະທົດລອງໃຊ້ວິທີ ການປ່ຽນເສັ້ນທາງນ້ຳ ພາຍໃນປະເທດ ໂດຍໃຊ້ນ້ຳໃນອ່າງນ້ຳຮູສາຫົງ ໄປກ່ອນ. ສິ່ງດັ່ງກ່າວ ຈະເປັນການດຳ ເນີນການທົດສອບ ເພື່ອເຮັດໃຫ້ບັນດາປະເທດສະມາຊິກທີ່ຖືກແຈ້ງນັ້ນ ເພື່ອເຫັນໄດ້ລ່ວງຫນ້າ ກ່ຽວກັບການນຳ ໃຊ້ແຫລ່ງນ້ຳຂອງໂຄງການດັ່ງກ່າວ ແລະ ຜົນກະທົບໃດຫນຶ່ງທີ່ເກີດຈາກໂຄງການດັ່ງກ່າວນີ້".

ດັ່ງທີ່ລະບຸໄວ້ໃນລະບຽບການຂອງການແຈ້ງເຕືອນໃຫ້ຊາບຂອງ MRC ນັ້ນ, ການຕົກລົງ ແລະ ການປຶກສາ ຫາລືລ່ວງຫນ້າ (PNPCA), ຂັ້ນຕອນການແຈ້ງເຕືອນໃຫ້ຊາບ ທີ່ກ່າວມາຂ້າງເທິງນັ້ນ ແມ່ນຫນຶ່ງໃນສາມສິ່ງຈຳ ເປັນທີ່ຕ້ອງເຮັດກ່ອນ ສຳລັບການພັດທະນາໂຄງການນຳໃຊ້ແຫລ່ງນ້ຳ ໃນຮູບແບບທີ່ແຕກຕ່າງກັນ ຢູ່ຕາມ

ອ່າງລຳແມ່ນ້ຳຂອງຕອນລຸ່ມ. ສຳລັບໂຄງການນຳໃຊ້ວິທີການປ່ຽນເສັ້ນທາງນ້ຳ ພາຍໃນປະເທດ ແລະ ໂຄງການ ປ່ຽນເສັ້ນທາງນ້ຳ ຂອງສາຍນ້ຳຂ້າມຊາດ ແບບຕະຫລອດປີ ລວມທັງການນຳໃຊ້ແຫລ່ງນ້ຳໃນລຳນ້ຳຂອງ ໃນລະດູຝົນນັ້ນ ແມ່ນຕ້ອງໄດ້ມີການແຈ້ງເຕືອນໃຫ້ຊາບກ່ອນ. ຂໍ້ມູນຂ່າວສານໃນຂັ້ນຕອນດັ່ງກ່າວນີ້ ຈະຊ່ວຍບັນດາປະເທດສະມາຊິກ ໃນການວາງແຜນໂຄງການນຳໃຊ້ແຫລ່ງນ້ຳອື່ນ.

ອີກສອງຂັ້ນຕອນຕໍ່ຈາກນັ້ນ ແມ່ນຂັ້ນຕອນການຕົກລົງ ແລະ ການປຶກສາຫາລືລ່ວງໜ້າ. ການປຶກສາຫາລືລ່ວງໜ້າ ຈະນຳໃຊ້ເຂົ້າໃນໂຄງການ ທີ່ສະເໜີນຳໃຊ້ແຫລ່ງນ້ຳ ໃນລຳແມ່ນ້ຳໃນລະດູແລ້ງ, ການປ່ຽນເສັ້ນທາງນ້ຳ ຈາກລຳນ້ຳໄປໃສ່ອ່າງນ້ຳອື່ນໃນລະດູຝົນ ແລະ ການປ່ຽນເສັ້ນທາງນ້ຳລົ້ນ ໄປຫາອ່າງນ້ຳອື່ນໆໃນລະດູແລ້ງ. ສຳລັບໂຄງການປ່ຽນເສັ້ນທາງນ້ຳ ຈາກລຳແມ່ນ້ຳໄປຫາອ່າງໃໝ່ ໃນລະດູແລ້ງນັ້ນ ຈະມີຂັ້ນຕອນຂອງການຕົກລົງສະເພາະຕື່ມອີກ.

ລັດຖະບານລາວ ໄດ້ທຳການຈັດສົ່ງບົດອະທິບາຍໂຄງການ ທີ່ສັງລວມຄຸນລັກສະນະສຳຄັນ ຂອງໂຄງການ. ເອກະສານທີ່ຈັດສົ່ງ ຍັງປະກອບມີບົດປະເມີນຜົນກະທົບ ທີ່ອາດຂະຫຍາຍຕົວຂຶ້ນ, ບົດປະເມີນຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ, ແຜນການຈັດສັນ ແລະ ຕິດຕາມ ກວດກາ ທາງດ້ານສັງຄົມ ແລະ ສິ່ງແວດລ້ອມ, ແຜນດຳເນີນການຈັດສັນພູມລຳເນົາ ແລະ ບັນດາເອກະສານອອກແບບກໍ່ສ້າງຕ່າງໆ.

ກອງເລຂາ ຄະນະກຳມາທິການແມ່ນ້ຳຂອງສາກົນ MRC ໄດ້ຈັດສົ່ງໜັງສືແຈ້ງເຕືອນໃຫ້ຊາບ ແລະ ຈະສະໜອງ ເອກະສານເພີ່ມເຕີມອື່ນໆ ໃຫ້ແກ່ສະມາຊິກຄະນະກຳມາທິການຮ່ວມ ຂອງອີກສາມປະເທດທີ່ກ່ຽວຂ້ອງ ເພື່ອພິຈາລະນາຕື່ມອີກ. ທ່ານ Guttman ກ່າວຕື່ມວ່າ: “ຂັ້ນຕອນ PNPCA ຮັບຮູ້ກ່ຽວກັບວິທີການຈັດຕັ້ງປະຕິບັດໂຄງການດັ່ງກ່າວ. ກ່ຽວກັບບັນຫາດັ່ງກ່າວນີ້, ທາງກອງເລຂາ ຈະອຳນວຍຄວາມສະດວກໃຫ້ແກ່ການປຶກສາຫາລືກັນ, ຈະສະແດງທັດສະນະແບບວິທະຍາສາດ ແລະ ຕາມຄວາມເປັນຈິງ ແລະ ຈະຈັດສົ່ງຄຳຄິດເຫັນເພີ່ມເຕີມ ກ່ຽວກັບການແຈ້ງເຕືອນດັ່ງກ່າວໃຫ້ແກ່ຄະນະກຳມາທິການຮ່ວມ”. “ສປປ ລາວ ໄດ້ສະແດງເຈດຈຳນົງ ທີ່ຈະດຳເນີນການປຶກສາຫາລືຕື່ມ ກັບບັນດາປະເທດສະມາຊິກ ທີ່ມີຄວາມເປັນຫ່ວງເປັນໄຍ ຫລື ມີຄຳຄິດເຫັນອື່ນໆອີກກ່ຽວກັບໂຄງການນີ້”.

ມາເຖິງປະຈຸບັນນີ້, ໄດ້ມີການຈັດສົ່ງໜັງສືແຈ້ງເຕືອນໃຫ້ຊາບ ກ່ຽວກັບຄວາມຕ້ອງການ ທີ່ຈະພັດທະນາໂຄງການໄຟຟ້ານ້ຳຕົກ ຢູ່ຕາມສາຂາແມ່ນ້ຳຂອງເຖິງ 41 ໂຄງການ ທີ່ຍັງຢູ່ໃນຂັ້ນຕອນຂອງການແຈ້ງເຕືອນໃຫ້ຊາບ ກຳລັງຢູ່ໃນຂັ້ນຕອນ PNPCA. ໃນນັ້ນມີ 3 ໂຄງການຈາກກຳປູເຈຍ, 17 ໂຄງການຈາກ ສປປ ລາວ, 2 ໂຄງການຈາກໄທ ແລະ 19 ໂຄງການຈາກ ຫວຽດນາມ. ໂຄງການ ມາເຖິງປະຈຸບັນນີ້, ມີພຽງເຂື່ອນໄຟຟ້ານ້ຳຕົກໄຊຍະບູລີ ໂຄງການດຽວ ທີ່ສະເໜີສ້າງເຂື່ອນຢູ່ຕາມລຳແມ່ນ້ຳຂອງ, ດັ່ງນັ້ນ ຈຶ່ງເກີດມີຂັ້ນຕອນຂອງການປຶກສາຫາລືລ່ວງໜ້າ.

ໂຄງການ ດອນສາຫົງ ແມ່ນຕັ້ງຢູ່ເຂດເມືອງໂຂງ ຂອງແຂວງຈຳປາສັກໃນ ສປປ ລາວ ແລະ ຕັ້ງຢູ່ຫ່າງຈາກນ້ຳຮູສາຫົງ 5 ກິໂລແມັດ, ເຊິ່ງເປັນໜຶ່ງໃນສາຍນ້ຳທີ່ໄຫລສູ່ລຳແມ່ນ້ຳຂອງ ເຊິ່ງຢູ່ຫ່າງຈາກຊາຍແດນລາວ-ກຳປູເຈຍ ປະມານ 2 ກິໂລແມັດ. ກຳແພງກັ້ນນ້ຳໜ້າເຂື່ອນ ສູງ 30 ແມັດ ແລະ ຈະຂະຫຍາຍກວ້າງອອກໄປເຖິງສົ້ນສຸດດ້ານລຸ່ມຂອງສາຍນ້ຳ ປະມານ 100 ແມັດ.

ຂັ້ນຕອນ PNPCA ໄດ້ຖືກສ້າງຂຶ້ນໃນສົນທິສັນຍາແມ່ນ້ຳຂອງປີ 1995. ມັນສະແດງໃຫ້ເຫັນເຖິງຄຳໝັ້ນສັນຍາຂອງບັນດາປະເທດ MRC ທີ່ຈະເຮັດວຽກຮ່ວມກັນ ເພື່ອປົກປັກຮັກສາຄວາມສົມດຸນທາງສິ່ງແວດລ້ອມ ແລະ ລະບົບນິເວດ ຢູ່ຕາມລຳນ້ຳ ແລະ ເພື່ອປ້ອງກັນຜົນກະທົບ ທີ່ເປັນອັນຕະລາຍຕ່າງໆ. ສຳລັບຈຸດປະສົງຂອງການຈັດຕັ້ງປະຕິບັດລະບຽບການຕ່າງໆນັ້ນ, ການນຳໃຊ້ແຫລ່ງນ້ຳ ໄດ້ຖືກກຳນົດໄວ້ວ່າ ການນຳໃຊ້ແຫລ່ງນ້ຳໃນຮູບແບບໃດໜຶ່ງ ທີ່ອາດກໍ່ໃຫ້ເກີດຜົນກະທົບຕໍ່ກັບຄຸນນະພາບ ຫລື ລະບົບການໄຫລວຽນຂອງລຳນ້ຳ.

**ໝາຍເຫດຈາກບັນນາທິການ:**
ຄະນະກຳມາທິການ MRC ເປັນອົງການສາກົນ ທີ່ຮັບຜິດຊອບກ່ຽວກັບການຮ່ວມມື ເພື່ອຄຸ້ມຄອງອ່າງແມ່ນ້ຳຂອງ ໃຫ້ມີຄວາມຍືນຍົງ ເຊິ່ງປະເທດສະມາຊິກປະກອບດ້ວຍກຳປູເຈຍ, ສປປ ລາວ, ໄທ ແລະ ຫວຽດນາມ. ຄະນະກຳມາທິການ ດັ່ງກ່າວນີ້ ຖືກສ້າງຕັ້ງຂຶ້ນມາ ເພື່ອສົ່ງເສີມການຮ່ວມມືກັນ ລະຫວ່າງບັນດາປະເທດສະມາຊິກ ແລະ ຄະນະກຳມາທິການດັ່ງກ່າວນີ້ ບໍ່ແມ່ນອົງການທີ່ອອກລະບຽບການ ຫລື ອົງການຂ້າມຊາດໃດໜຶ່ງ.

ເພື່ອກ້າວຂ້າມສິ່ງທ້າທາຍດັ່ງກ່າວນີ້, ຄະນະກຳມາທິການ ໄດ້ພິຈາລະນາເຖິງທຸກຂົງເຂດ ລວມມີການປະມົງແບບຍືນຍົງ, ການກຳນົດກາລະໂອກາດດ້ານກະສິກຳ, ການເກັບຮັກສາສິດເສລີພາບຂອງການພາທາງ, ການຄຸ້ມຄອງໄພນ້ຳຖ້ວມ ແລະ ການອະນຸລັກລະບົບນິເວດທີ່ສຳຄັນຕ່າງໆ. ນອກຈາກນີ້, ຍັງຄຳນຶງເຖິງບັນດາຜົນກະທົບໃນອະນາຄົດ ທີ່ອາດເກີດໄພນ້ຳຖ້ວມທີ່ຮຸນແຮງກວ່າເກົ່າ, ໄພແຫ້ງແລ້ງທີ່ແກ່ຍາວເວລາອອກໄປ ແລະ ລະດັບນ້ຳທະເລ ທີ່ເພີ່ມສູງຂຶ້ນ ເນື່ອງຈາກການປ່ຽນແປງຂອງສະພາບດິນຟ້າອາກາດ. ໃນການໃຫ້ຄຳແນະນຳນັ້ນ, ທາງ MRC ແນໃສ່ອຳນວຍຄວາມສະດວກ ໃຫ້ມີການເຈລະຈາກັນໃນວົງກວ້າງ ລະຫວ່າງພາກລັດ, ເອກະຊົນ ແລະ ອົງການສັງຄົມຕ່າງໆ.

ກອງເລຂາ MRC ໄດ້ສະໜອງການບໍລິການ ດ້ານວຽກງານບໍລິຫານ, ການໃຫ້ຄຳປຶກສາ ແລະ ດ້ານເຕັກນິກແກ່ບັນດາປະເທດສະມາຊິກ. ກອງເລຂາຄະນະກຳມາທິການແມ່ນ້ຳຂອງສາກົນ ຍັງອຳນວຍຄວາມສະດວກໃນການຈັດກອງປະຊຸມລະດັບພາກພື້ນ ໃຫ້ແກ່ບັນດາປະເທດສະມາຊິກ ແລະ ໃຫ້ຄຳປຶກສາດ້ານເຕັກນິກ ກ່ຽວກັບການວາງແຜນຮ່ວມກັນ, ການປະສານງານ ແລະ ການຮ່ວມມືກັນ. ທາງກອງເລຂາ ຍັງເຮັດວຽກຢ່າງໃກ້ຊິດກັບບັນດາອົງການຜູ້ປະສານງານ ຈາກສີ່ປະເທດສະມາຊິກ ເຊັ່ນ: ຄະນະກຳມາທິການແມ່ນ້ຳຂອງແຫ່ງຊາດ (NMCs) ແລະ ໜ່ວຍງານອື່ນໆ ຈາກປະເທດສະມາຊິກ. ປະຈຸບັນນີ້, ປະເທດ ສາທາລະນະລັດ ປະຊາຊົນຈີນ ແລະ ສະຫະພາບ ມຽນມາ ກໍ່ໄດ້ເຂົ້າເປັນຄູ່ຮ່ວມເຈລະຈາກັບ ຄະນະກຳມາທິການແມ່ນ້ຳຂອງສາກົນ MRC ແລ້ວ.

**ຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່:**
ທ່ານ ສຸລະສັກ ກ້າຫານ, ເຈົ້າໜ້າທີ່ໃຫ້ຂໍ້ມູນຂ່າວສານ
ໂທ: +856 263 263 ຫລື +856 20 555 28726 (ເບີໂທລະສັບຢູ່ນະຄອນຫລວງ ວຽງຈັນ)
ອີເມວ: Surasak@mrcmekong.org